ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******************************

ກະຊວງການຕ່າງປະເທດ

ເລກທີ 7443 /ຕປທ.ກກສ1

ນະຄອນຫລວງວຽງຈັນ, ວັນທີ 22. ພະຈິກ 2007.

# ຂໍ້ຕົກລົງ

## ວ່າດ້ວຍການສ້າງຕັ້ງສໍານັກງານກົງສຸນກິດຕິມະສັກ ແຫ່ງ ສາທະລະນະລັດ ປະຊາທິປະໄຕ ປະຊາຊົນລາວ( ສ ປປ ລາວ) ປະຈໍາຢູ່ຕ່າງປະເທດ

- ອີງຕາມດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການຕ່າງປະເທດສະບັບ ເລກທີ 32/ນຍ,ລົງວັນທີ 17 ມີນາ 2000;
- ອີງຕາມສົນທິສັນຍາກຸງວຽນວ່າດ້ວຍການພົວພັນທາງການກົງສຸນ ສະບັບລົງວັນທີ 24 ເມສາ 1963;
- ເພື່ອປະຕິບັດແນວທາງນະໂຍບາຍເປີດກວ້າງສາຍພົວພັນ ແລະ ການຮ່ວມມືກັບຕ່າງປະເທດຂອງ ພັກ ແລະ ລັດຖະບານ ແຫ່ງ ສ ປປລາວ; ແລະ
- ເພື່ອເພີ່ມທະວີການປົກປ້ອງ ແລະ ສິ່ງເສີມສິດ ແລະ ຜົນປະໂຫຍດຂອງ ສ ປປລາວ ທັງສ່ວນບຸກຄົນ ແລະ ນິຕິບຸກຄົນທີ່ຕ່າງປະເທດ.

## ລັດຖະມົນຕີວ່າການກະຊວງການຕ່າງປະເທດອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກໍານົດພາລະບົດບາດ, ສິດ, ໜ້າທີ່, ຫລັກການ ແລະ ລະບຽບການໃນການສ້າງຕັ້ງສໍານັກງານກົງສຸນກິດຕິມະສັກ ແລະ ການແຕ່ງຕັ້ງກົງສຸນກິດຕິມະສັກ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສໍານັກງານກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ປະຈໍາຢູ່ຕ່າງປະເທດ.

**ມາດຕາ 2. ສຳນັກງານກົງສຸນກິດຕິມະສັກ**

2.1 ສຳນັກງານກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ແມ່ນສຳນັກງານກົງສຸນ ແຫ່ງ ສປປ ລາວ ຊຶ່ງແມ່ນກົງສຸນກິດຕິມະສັກເປັນຜູ້ຄຸ້ມຄອງ.

2.2 ສຳນັກງານກົງສຸນກິດຕິມະສັກແມ່ນຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ;

2.3 ໃນກໍລະນີບໍ່ມີສຳນັກງານການທູດ ແຫ່ງ ສ ປປ ລາວປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ, ສຳນັກງານກົງສຸນກິດຕິມະສັກແມ່ນຢູ່ພາຍໃຕ້ການຊີ້ນຳໂດຍກົງຂອງກົມກົງສຸນ ກະຊວງການຕ່າງປະເທດ.

**ມາດຕາ 3. ນິຍາມຄຳສັບ**

3.1 ຄຳວ່າ "ສຳນັກງານຜູ້ຕາງໜ້າ ແຫ່ງ ສ ປປ ລາວ ປະຈຳຢູ່ຕ່າງປະເທດ" ຫມາຍເຖິງສຳນັກງານການທູດ ຫລື ສຳນັກງານກົງສຸນ ແຫ່ງ ສ ປປ ລາວ;

3.2 ຄຳວ່າ "ສຳນັກງານການທູດ ແຫ່ງ ສປປ ລາວ" ຫມາຍເຖິງສະຖານເອກອັກຄະລັດຖະທູດ ແຫ່ງ ສ ປປ ລາວ;

3.3 ຄຳວ່າ "ສຳນັກງານກົງສຸນ ແຫ່ງ ສປປ ລາວ" ຫມາຍເຖິງສະຖານກົງສຸນໃຫຍ່ ຫລື ສະຖານກົງສຸນ ແຫ່ງ ສ ປປ ລາວ;

3.4 ຄຳວ່າ "ສະຫມຽນກົງສຸນກິຕິມະສັກ " ຫມາຍເຖິງບຸກຄົນທີ່ເປັນຄົນທ້ອງຖິ່ນ ຊຶ່ງກົງສຸນກິຕິມະສັກຮັບເຂົ້າເຮັດວຽກບໍລິຫານ, ເຕັກນິກ ແລະ ເລຂາຂອງສຳນັກງານກົງສຸນກິຕິມະສັກ;

3.5 ຄຳວ່າ "ຂອບເຂດເຄື່ອນໄຫວກົງສຸນກິດຕິມະສັກ" ຫມາຍເຖິງຂອບເຂດທີ່ສຳນັກງານກົງສຸນກິດຕິມະສັກໄດ້ຮັບອະນຸຍາດໃຫ້ປະຕິບັດຫນ້າທີ່ກົງສຸນ;

3.6 ຄຳວ່າ "ບັນນະສານກົງສຸນກິດຕິມະສັກ" ຫມາຍເຖິງອຸປະກອນຮັບໃຊ້ຫ້ອງການ ແລະ ທຸກໆເອກະສານທາງການ: ຈົດຫມາຍ, ປຶ້ມອ່ານ, ປຶ້ມບັນທຶກ, ທຸງຊາດ, ເຄື່ອງຫມາຍຊາດ ແລະ ກາປະທັບຂອງສຳນັກ ງານກົງສຸນກິດຕິມະສັກ.

**ມາດຕາ 4. ຫລັກການທີ່ພົວພັນເຖິງສຳນັກງານກົງສຸນກິດຕິມະສັກ**

ຫລັກການທີ່ພົວພັນເຖິງສຳນັກງານກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ໃນບັນດາສົນທິສັນຍາລະຫວ່າງປະເທດທີ່ ສ ປປ ລາວເຂົ້າຮ່ວມເປັນພາຄີ, ໂດຍສະເພາະສົນທິສັນຍາວຽງວຽນວ່າດ້ວຍການພົວພັນທາງການກົງສຸນສະບັບລົງວັນທີ 22 ເມສາ 1963.

**ມາດຕາ 5. ຊັ້ນຂອງສຳນັກງານກົງສຸນກິດຕິມະສັກ ແລະ ກົງສຸນກິດຕິມະສັກ**

5.1 ສຳນັກງານກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ມີ 2 ຊັ້ນດັ່ງນີ້: ສະຖານກົງສຸນໃຫຍ່ກິດຕິມະສັກ ແລະ ສະຖານກົງສຸນກິດຕິມະສັກ;

5.2 ຊັ້ນຂອງສຳນັກງານກົງສຸນກິດຕິມະສັກ ແຫ່ງ ສປປ ລາວ ຈະຖືກກຳນົດໂດຍສອດຄ່ອງກັບຂອບເຂດເຄື່ອນໄຫວກົງສຸນ, ບໍລິມາດຂອງວຽກງານຕົວຈິງ ແລະ ລະບຽບການທີ່ກ່ຽວຂ້ອງຂອງລັດທີ່ຮັບ.

5.3 ຊັ້ນຂອງກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ຈະຖືກກຳນົດໂດຍສອດຄ່ອງກັບຊັ້ນຂອງສຳນັກງານກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ຊຶ່ງໄດ້ກຳນົດໄວ້ໃນຂໍ້ 5.1 ແລະ 5.2 ຂອງມາດຕານີ້.

**ມາດຕາ 6. ຫລັກການສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ ແລະ ການແຕ່ງຕັ້ງກົງສຸນກິດຕິມະສັກ**

6.1 ການສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ຕ້ອງໄດ້ຮັບການຕົກລົງເຫັນດີຈາກລັດຖະບານ ແຫ່ງ ສປປ ລາວ ບົນພື້ນຖານການເຫັນດີເຫັນພ້ອມຈາກລັດຖະບານຂອງລັດທີ່ຮັບ;

6.2 ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສ ປປ ລາວ ເປັນຜູ້ແຕ່ງຕັ້ງກົງສຸນກິດຕິມະສັກ ແຫ່ງ ສ ປປລາວ ບົນພື້ນຖານການຕົກລົງເຫັນດີຂອງລັດຖະບານ ແຫ່ງ ສ ປປ ລາວ ແລະ ການເຫັນດີເຫັນພ້ອມຈາກລັດຖະບານຂອງລັດທີ່ຮັບ.

6.3 ສຳນັກງານກົງສຸນກິດຕິມະສັກ ແຫ່ງ ສ ປປລາວ ຈະໄດ້ຮັບການສ້າງຕັ້ງຢູ່ບັນດາປະເທດທີ່ມີສາຍພົວພັນການທູດກັບ ສ ປປ ລາວ, ແຕ່ ສ ປປ ລາວບໍ່ມີສຳນັກງານຜູ້ຕາງໜ້າປະຈຳຢູ່ບັນດາປະເທດເຫລົ່ານັ້ນ ຫລື ຢູ່ເຂດຫ່າງໄກຈາກສຳນັກງານຜູ້ຕາງໜ້າຂອງ ສ ປປ ລາວ. ຢູ່ບັນດາປະເທດ ຫລື ເຂດດັ່ງກ່າວທີ່ມີຄວາມຮຽກຮ້ອງຕ້ອງການທາງດ້ານວຽກງານກົງສຸນ ເຊັ່ນ: ມີພົນລະເມືອງລາວອາໃສຢູ່ເປັນຈຳນວນຫລວງຫລາຍ ຫລື ມີທ່າແຮງທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ຊຶ່ງອາດສາມາດພັດທະນາ ແລະ ສົ່ງເສີມໃຫ້ມີການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ການລົງທຶນ, ການບໍລິການ, ການທ່ອງທ່ຽວ, ການສຶກສາ, ແຮງງານ ແລະ ອື່ນໆລະຫວ່າງຂອບເຂດເຄື່ອນໄຫວກົງສຸນກັບ ສ ປປ ລາວ.

**ມາດຕາ 7. ຫລັກການປະຕິບັດພາລະບົດບາດໜ້າທີ່ກົງສຸນ**

7.1 ກົງສຸນກິດຕິມະສັກປະຕິບັດພາລະບົດບາດໜ້າທີ່ກົງສຸນເປັນບາງສ່ວນ ຫລື ທັງໝົດດັ່ງທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຕາມການມອບໝາຍຂອງລັດຖະມົນຕີວ່າການກະຊວງການຕ່າງປະເທດ ໃນເງື່ອນໄຂທີ່ການປະຕິບັດຂໍ້ກຳນົດດັ່ງກ່າວບໍ່ຂັດກັບລະບຽບກົດໝາຍ ແລະ ຂະນົບທຳນຽມປະເພນີຂອງລັດທີ່ຮັບ. ໃນກໍລະນີພິເສດ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ອາດມອບໝາຍໃຫ້ກົງສຸນກິດຕິມະສັກປະຕິບັດໜ້າທີ່ກົງສຸນອື່ນໆຕື່ມອີກ.

7.2 ກົງສຸນກິດຕິມະສັກບໍ່ສາມາດມອບສິດໃຫ້ບຸກຄົນອື່ນປະຕິບັດໜ້າທີ່ກົງສຸນດັ່ງທີ່ໄດ້ລະບຸໄວ້ໃນຂໍ້ 7.1 ຂອງມາດຕານີ້, ຍົກເວັ້ນກໍລະນີທີ່ໄດ້ຮັບການອະນຸມັດຈາກລັດຖະມົນຕີວ່າການກະຊວງການຕ່າງປະເທດ.

ມາດຕາ 8. ເງື່ອນໄຂຂອງກົງສຸນກິດຕິມະສັກ

8.1 ຜູ້ທີ່ຖືສັນຊາດລາວ ຫລື ຜູ້ທີ່ຖືສັນຊາດຂອງລັດທີ່ຮັບ ຫລື ຜູ້ທີ່ຖືສັນຊາດຂອງລັດທີ່ 3 ຊຶ່ງມີພູມລຳເນົາຖາວອນຢູ່ໃນລັດທີ່ຮັບ;

8.2 ຜູ້ທີ່ມີບົດບາດ ແລະ ມີອິດທິພົນ ແລະ ຊື່ສຽງໃນສັງຄົມ ທັງມີຖານະທາງດ້ານເສດຖະກິດດີ;

8.3 ຜູ້ທີ່ສາມາດເຄື່ອນໄຫວດ້ານວິຊາຊີບ ແລະ ດຳເນີນທຸລະກິດການຄ້າ;

8.4 ຜູ້ທີ່ມີບົດຮຽນທາງດ້ານການຄຸ້ມຄອງ ແລະ ບໍລິຫານ;

8.5 ຜູ້ທີ່ບໍ່ແມ່ນລັດຖະກອນຂອງລັດໃດໜຶ່ງ ແລະ ບໍ່ເຂົ້າຮ່ວມເຄື່ອນໄຫວທາງດ້ານການເມືອງ;

8.6 ຜູ້ທີ່ບໍ່ເຄີຍເປັນຜູ້ຕ້ອງຫາໃນຄະດີອາຍາມາກ່ອນ ແລະ ມີປະຫວັດຈະແຈ້ງ;

8.7 ຜູ້ທີ່ສາມາດຕິດຕໍ່ພົວພັນກັບເຈົ້າໜ້າທີ່ລັດຖະບານ ແລະວົງການທຸລະກິດຂອງລັດທີ່ຮັບໄດ້ຢ່າງສະດວກ;

8.8 ຜູ້ທີ່ມີຄວາມຮູ້ກ່ຽວກັບ ສ ປປ ລາວເປັນຢ່າງດີ ແລະ ມີຄວາມເຫັນອົກເຫັນໃຈຕໍ່ ສ ປປ ລາວ;

8.9 ຜູ້ທີ່ມີສຸຂະພາບກາຍແຂງແຮງ ແລະ ຈິດລົມບູນ ເພື່ອປະຕິບັດໜ້າທີ່ໄດ້ເປັນຢ່າງດີ ແລະ ດີແທ້ອາຍຸບໍ່ເກີນ 65 ປີ ໃນເວລາແຕ່ງຕັ້ງ;

8.10 ຜູ້ທີ່ບໍ່ເປັນພົນລະເມືອງຂອງປະເທດທີ່ເປັນປໍລະປັກກັບ ສ ປປ ລາວ ຫລື ພົນລະເມືອງຂອງປະເທດທີ່ສ ປປ ລາວ ບໍ່ຮັບຮູ້;

8.11 ຜູ້ທີ່ບໍ່ໄດ້ປະຕິບັດໜ້າທີ່ກົງສຸນກິດຕິມະສັກໃຫ້ປະເທດທີ່ເປັນປໍລະປັກກັບສ ປປລາວ ຫລື ສ ປປ ລາວບໍ່ຮັບຮູ້.

## ໝວດທີ 2
## ຂັ້ນຕອນການສະເໜີເປັນກົງສຸນກິດຕິມະສັກ, ການພິຈາລະນາ ແຕ່ງຕັ້ງກົງສຸນກິດຕິມະສັກ, ການສະເໜີແຕ່ງຕັ້ງກົງສຸນກິດຕິ ມະສັກ ແລະ ການເລີ່ມຕົ້ນປະຕິບັດໜ້າທີ່ຂອງກົງສຸນກິດຕິມະສັກ

ມາດຕາ 9. ຂັ້ນຕອນການສະເໜີເປັນກົງສຸນກິດຕິມະສັກ

9.1 ຜູ້ສະເໜີເປັນກົງສຸນກິດຕິມະສັກຕ້ອງຂຽນຄຳຮ້ອງ ສະແດງຄວາມພ້ອມເປັນກົງສຸນກິດຕິມະສັກ ແຫ່ງ ສປປ ລາວ ສະເໜີຕໍ່ສຳນັກງານການທູດ ແຫ່ງ ສ. ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ(ຖ້າມີ), ຖ້າບໍ່ມີສຳນັກງານດັ່ງກ່າວປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຜູ້ສະເໜີອາດສົ່ງຄຳຮ້ອງເຖິງສຳນັກງານການທູດຂອງ ສ ປປ ລາວ ທີ່ຢູ່ໃກ້ທີ່ສຸດ ຫລື ອາດສະເໜີຕໍ່ກົມກົງສຸນ ກະຊວງການຕ່າງປະເທດໂດຍກົງ;

9.2 ສຳນວນຄຳຮ້ອງດັ່ງກ່າວມີ:

1) ຮູບຖ່າຍສະຖານທີ່ ແລະ ຕຶກ(ເຮືອນ) ບ່ອນທີ່ຈະໃຊ້ເປັນຫ້ອງການຂອງສຳນັກງານກົງສຸນກິດຕິມະສັກ;
2) ລາຍລະອຽດຊີວະປະຫວັດມີດັ່ງນີ້:

ກ) ຊື່ ແລະ ນາມສະກຸນ;

ຂ) ວັນເດືອນປີເກີດ ແລະ ສະຖານທີ່ເກີດ;

ຄ) ທີ່ຢູ່ສະຖານທີ່ພັກເຊົາ ແລະ ບ່ອນເຮັດວຽກ;

ງ) ປະຫວັດການສຶກສາທົ່ວໄປ ແລະ ວິຊາສະເພາະ;

ຈ) ຊື່ບໍລິສັດຂອງຜູ້ກ່ຽວ, ວັນເດືອນປີສ້າງຕັ້ງບໍລິສັດ, ວັນເດືອນປີເຂົ້າເຮັດໃນບໍລິສັດ ແລະ ໜ້າທີ່ຮັບຜິດຊອບ;

ສ) ລາຍລະອຽດການດຳເນີນທຸລະກິດຂອງບໍລິສັດ ແລະ ວຽກຕົວຈິງທີ່ຜູ້ກ່ຽວຮັບຜິດຊອບ;

ຊ) ແຈ້ງຊື່ຫຸ້ນສ່ວນຖ້າມີທຸລະກິດຢູ່ ສ ປປ ລາວ;

ຍ) ສາຍພົວພັນທີ່ກ່ຽວຂ້ອງອື່ນໆຢູ່ໃນ ສ ປປ ລາວ ແລະ ປະເທດຕ່າງໆ(ຖ້າມີ);

ດ) ຖ້າເປັນກົງສຸນກິດຕິມະສັກໃຫ້ປະເທດໃດໜຶ່ງ ຫລື ເຄີຍເປັນຕ້ອງແຈ້ງລາຍລະອຽດ;

ຕ) ພາສາທີ່ເວົ້າໄດ້;

ຖ) ໄລຍະເວລາທີ່ດຳລົງຊີວິດຢູ່ໃນລັດທີ່ຮັບ ຫລື ຢູ່ສະຖານທີ່ໆຜູ້ກ່ຽວມີພູມລຳເນົາຖາວອນ;

3) ແຜນປະຕິບັດງານ ແລະ ແຜນການເຄື່ອນໄຫວ ຊຶ່ງຈະດຳເນີນການພາຍໃນວາລະແຕ່ງຕັ້ງ;
4) ໜັງສືຢັ້ງຢືນຈາກທະນາຄານຂອງຜູ້ກ່ຽວ;
5) ໃບແຈ້ງໂທດ;
6) ຖ້າຜູ້ກ່ຽວເຮັດວຽກໃຫ້ບໍລິສັດຕ້ອງມີໃບອະນຸຍາດຈາກບໍລິສັດ.

## ມາດຕາ 10. ຂັ້ນຕອນການພິຈາລະນາຄຳຮ້ອງສະເໜີເປັນກົງສຸນກິດຕິມະສັກ

10.1 ສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບພິຈາລະນາປະກອບຄຳເຫັນ ແລ້ວສົ່ງໃຫ້ກົມກົງສຸນ ກະຊວງການຕ່າງປະເທດ;

10.2 ກົມກົງສຸນ ກະຊວງການຕ່າງປະເທດຈະຄົ້ນຄວ້າ ແລະ ສະເໜີຄຳເຫັນຕໍ່ລັດຖະມົນຕີວ່າການກະຊວງການຕ່າງປະເທດ;

10.3 ຖ້າລັດຖະມົນຕີວ່າການກະຊວງການຕ່າງປະເທດພິຈາລະນາເຫັນວ່າ ມີຄວາມຈຳເປັນສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ ແລະ ແຕ່ງຕັ້ງກົງສຸນກິດຕິມະສັກຕາມການສະເໜີຂອງສຳນັກງານການທູດ ແຫ່ງ ສ ປປລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ແລະ ກົມກົງສຸນ ກະຊວງການຕ່າງປະເທດ ຈຶ່ງນຳສະເໜີໃຫ້ລັດຖະບານພິຈາລະນາຕົກລົງ;

10.4 ເມື່ອລັດຖະບານ ແຫ່ງ ສ ປປ ລາວ ໄດ້ຕົກລົງເຫັນດີຕາມການສະເໜີຂອງລັດຖະມົນຕີວ່າການກະຊວງການຕ່າງປະເທດ, ກະຊວງການຕ່າງປະເທດຈຶ່ງດຳເນີນຕາມຂັ້ນຕອນຕ່າງໆ.

**ມາດຕາ 11. ຂັ້ນຕອນສະເໜີສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ ແລະ ການແຕ່ງຕັ້ງກົງສຸນກິດຕິມະສັກຕໍ່ລັດທີ່ຮັບ.**

11.1 ພາຍຫລັງລັດຖະບານ ແຫ່ງ ສ ປປ ລາວໄດ້ຕົກລົງເຫັນດີໃນການສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ ແລະ ແຕ່ງຕັ້ງກົງສຸນກິດຕິມະສັກແລ້ວ, ກົມກົງສຸນ ກະຊວງການຕ່າງປະເທດຈະແນະນຳໃຫ້ສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ດຳເນີນການສະເໜີສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ ແລະ ສະເໜີຊື່ຜູ້ສະໝັກເປັນກົງສຸນກິດຕິມະສັກ ພ້ອມທັງເອກະສານທີ່ກ່ຽວຂ້ອງໃຫ້ລັດຖະບານຂອງລັດທີ່ຮັບພິຈາລະນາໃຫ້ຄວາມເຫັນດີເຫັນພ້ອມຕາມຂັ້ນຕອນ ແລະ ລະບຽບການທີ່ກ່ຽວຂ້ອງຂອງລັດທີ່ຮັບ. ໃນກໍລະນີບໍ່ມີສຳນັກງານການທູດຂອງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ, ກົມກົງສຸນ ກະຊວງການຕ່າງປະເທດຈະດຳເນີນການສະເໜີດັ່ງກ່າວຜ່ານສຳນັກງານການທູດຂອງລັດທີ່ຮັບປະຈຳຢູ່ ສ ປປ. ລາວ ຫລື ສະເໜີຕໍ່ກະຊວງການຕ່າງປະເທດຂອງລັດທີ່ຮັບໂດຍກົງ;

11.2 ພາຍຫລັງລັດຖະບານຂອງລັດທີ່ຮັບໄດ້ເຫັນດີເຫັນພ້ອມແລ້ວ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ຈຶ່ງຈະອອກສານແຕ່ງຕັ້ງ ແລະ ຂໍ້ຕົກລົງແຕ່ງຕັ້ງກົງສຸນກິດຕິມະສັກ;

11.3 ພາຍຫລັງລັດຖະມົນຕີວ່າການກະຊວງການຕ່າງປະເທດໄດ້ອອກສານແຕ່ງຕັ້ງ ແລະ ຂໍ້ຕົກລົງແຕ່ງຕັ້ງກົງສຸນກິດຕິມະສັກແລ້ວ, ກົມກົງສຸນ ກະຊວງການຕ່າງປະເທດຈະແນະນຳໃຫ້ສຳນັກງານການທູດ ແຫ່ງ ສ ປປລາວ ປະຈຳລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບດຳເນີນການສະເໜີຂໍໜັງສືຮັບຮອງກົງສຸນ(Exequatur)ຈາກລັດຖະບານຂອງລັດທີ່ຮັບໃຫ້ກົງສຸນກິດຕິມະສັກ.

**ມາດຕາ 12. ການເລີ່ມຕົ້ນປະຕິບັດໜ້າທີ່ຂອງກົງສຸນກິດຕິມະສັກ**

ກົງສຸນກິດຕິມະສັກ ຈະມີສິດເລີ່ມປະຕິບັດໜ້າທີ່ໄດ້ກໍຕໍ່ເມື່ອໄດ້ຮັບໜັງສືຮັບຮອງກົງສຸນ (Exequatur) ອອກໃຫ້ໂດຍລັດຖະບານຂອງລັດທີ່ຮັບ.

## ໝວດທີ 3
## ພາລະບົດບາດ, ສິດ ແລະ ໜ້າທີ່

**ມາດຕາ 13. ພາລະບົດບາດ**

13.1 ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ສ ປປ ລາວ, ທັງສ່ວນບຸກຄົນ ແລະ ນິຕິບຸກຄົນໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນ ໂດຍສອດຄ່ອງກັບບັນດາສົນທິສັນຍາລະຫວ່າງປະເທດທີ່ ສ ປປ ລາວ ແລະ ລັດທີ່ຮັບໄດ້ລົງນາມ ຫລື ເຂົ້າຮ່ວມເປັນພາຄີ ຫລື ກົດໝາຍປະເພນີລະຫວ່າງປະເທດ;

13.2 ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ວັດທະນະທໍາ-ສັງຄົມ, ການທ່ອງທ່ຽວ ແລະ ອື່ນໆລະຫວ່າງ ສ ປປ ລາວ ແລະ ລັດທີ່ຮັບ;

ມາດຕາ 14. ສິດ ແລະ ໜ້າທີ່

**14.1 ໜ້າທີ່ໃນການປົກປ້ອງ**

- ເອົາທຸກມາດຕະການອັນເໝາະສົມເພື່ອເຮັດໃຫ້ບຸກຄົນ ແລະ ນິຕິບຸກຄົນລາວຢູ່ໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນໄດ້ຮັບສິດ ແລະ ຜົນປະໂຫຍດອັນຊອບທໍາຕາມລະບຽບກົດໝາຍຂອງລັດທີ່ຮັບ ຫລື ຕາມຂໍ້ກໍານົດຂອງບັນດາສົນທິສັນຍາລະຫວ່າງປະເທດທີ່ ສ ປປລາວ ແລະ ລັດທີ່ຮັບໄດ້ລົງນາມ ຫລື ເຂົ້າຮ່ວມເປັນພາຄີ.
- ໃນກໍລະນີມີພົນລະເມືອງລາວຖືກຈັບກຸມຄຸມຂັງຊົ່ວຄາວ, ຖືກຈໍາຄຸກ ຫລື ເສຍຊີວິດໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນ, ຕ້ອງໄດ້ລາຍງານໃຫ້ສໍານັກງານການທູດ ແຫ່ງ ສ ປປ ລາວ ປະຈໍາລັດທີ່ຮັບ ຫລື ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດ ທັງປະຕິບັດຕາມການຊີ້ນໍາຂອງສໍານັກງານດັ່ງກ່າວມານັ້ນ.

**14.2 ໜ້າທີ່ໃນການຕິດຕາມ ແລະ ສະໜອງຂໍ້ມູນຂ່າວສານ**

- ລາຍງານສະພາບ ແລະ ວິວັດທະນາການທາງດ້ານເສດຖະກິດ-ການຄ້າ ຕາມການສະເໜີຂອງສໍານັກງານການທູດ ແຫ່ງ ສ ປປ ລາວ ປະຈໍາຢູ່ລັດທີ່ຮັບ ຫລື ຮັບຜິດຊອບລັດທີ່ຮັບ ຫລື ກະຊວງການຕ່າງປະເທດ;
- ສະໜອງ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບລະບຽບກົດໝາຍ ແລະ ຂະນົບທໍານຽມຮີດຄອງປະເພນີຂອງລັດທີ່ຮັບໃຫ້ບຸກຄົນ ແລະ ນິຕິບຸກຄົນລາວຢູ່ໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນຊາບ, ໂດຍສະເພາະແມ່ນຂໍ້ມູນກ່ຽວກັບລະບຽບການເຂົ້າ-ອອກເມືອງ, ການພັກຢູ່, ອາໄສ, ການປະກອບອາຊີບຂອງຊາວຕ່າງປະເທດ ແລະ ການເຄື່ອນໄຫວຂອງນິຕິບຸກຄົນຕ່າງປະເທດຢູ່ໃນລັດທີ່ຮັບ;
- ລາຍງານໃຫ້ສໍານັກງານການທູດ ແຫ່ງ ສ ປປ ລາວ ປະຈໍາຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດຊາບ ໃນກໍລະນີມີການລະບາດຂອງພະຍາດຢູ່ໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນ ຊຶ່ງຈະກໍ່ໃຫ້ເກີດຜົນຮ້າຍຕໍ່ສຸຂະພາບຂອງຄົນ, ສັດ ແລະ ພືດ.

**14.3 ໜ້າທີ່ໃນການສະໜັບສະໜູນ ແລະ ໃຫ້ການຊ່ວຍເຫລືອພົນລະເມືອງ**

- ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອການເຄື່ອນໄຫວທາງດ້ານວັດທະນະທໍາ ແລະ ສັງຄົມຂອງພົນລະເມືອງລາວ;
- ໃຫ້ການຊ່ວຍເຫລືອທາງດ້ານວັດຖຸແກ່ພົນລະເມືອງລາວຢູ່ໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນໃນເມື່ອເຂົາເຈົ້າປະສົບໄພພິບັດ, ຄວາມຍຸ້ງຍາກ, ເຈັບເປັນ ແລະ ອື່ນໆ;
- ຢ້ຽມຢາມພົນລະເມືອງລາວທີ່ດໍາລົງຊີວິດຢູ່ໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນ.

**14.4 ໜ້າທີ່ໃນການຮັບ ແລະ ນໍາສົ່ງໃບສະເໜີ ແລະ ເອກະສານຕ່າງໆ**

- ຮັບ ແລະ ນຳສົ່ງໃບສະເໜີ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງຂອງບຸກຄົນ ແລະ ນິຕິບຸກຄົນລາວຢູ່ໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນ ແລະ ນຳສົ່ງໃຫ້ສຳນັກງານການທູດແຫ່ງ ສ ປປ ລາວປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດ;
- ຮັບ ແລະ ນຳສົ່ງເອກະສານກ່ຽວກັບການເກັບກຳສະຖິຕິຂອງພົນລະເມືອງລາວທີ່ດຳລົງຊີວິດຢູ່ໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນ ຫລື ສະເໜີບັນຫາກ່ຽວກັບວຽກງານດັ່ງກ່າວໃຫ້ສຳນັກງານທີ່ໄດ້ລະບຸໄວ້ໃນວັກ 1 ຂອງຂໍ້ 14.4 ນີ້.

14.5 ໜ້າທີ່ກ່ຽວກັບການສືບທອດມໍລະດົກ

- ໃນກໍລະນີມີການເປີດພິໃນກຳ ຊຶ່ງພົນລະເມືອງລາວຜູ້ໃດຜູ້ໜຶ່ງມີສິດສືບທອດມໍລະດົກ ແຕ່ບຸກຄົນດັ່ງກ່າວບໍ່ມີໜ້າຢູ່ໃນລັດທີ່ຮັບ ຫລື ບໍ່ໄດ້ມອບສິດໃຫ້ບຸກຄົນອື່ນເປັນຜູ້ຕາງໜ້າໃຫ້ຕົນ, ກົງສຸນກິດຕິມະສັກມີພັນທະໃນການເອົາມາດຕະການອັນຈຳເປັນໂດຍໄວເທົ່າທີ່ຈະໄວໄດ້ ເພື່ອເຮັດໜ້າທີ່ເປັນຜູ້ຕາງໜ້າປົກປ້ອງສິດ ແລະ ຜົນປະໂຫຍດຂອງບຸກຄົນດັ່ງກ່າວ ແລະ ພ້ອມກັນນັ້ນ ກໍລາຍງານໃຫ້ສຳນັກງານການທູດແຫ່ງ ສ ປປ ລາວ ປະຈຳໃນລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດຊາບ;
- ໃນກໍລະນີມີການເປີດພິໃນກຳ ຊຶ່ງມີຜົນປະໂຫຍດຕໍ່ ສ ປປ ລາວ ຫລື ຕໍ່ນິຕິບຸກຄົນລາວ, ກົງສຸນກິດຕິມະສັກກໍມີສິດຕາງໜ້າ ແລະ ລາຍງານຕາມທີ່ໄດ້ກຳນົດໄວ້ໃນວັກ 1 ຂອງຂໍ້ 14.5 ນີ້;

14.6 ໜ້າທີ່ໆກ່ຽວຂ້ອງເຖິງກຳປັ່ນ,ເຮືອ, ເຄື່ອງບິນ ແລະ ຍານພາຫະນະຕ່າງໆ

- ໃນກໍລະນີຈຳເປັນ, ກົງສຸນກິດຕິມະສັກຕ້ອງໃຫ້ການຊ່ວຍເຫລືອທຸກຢ່າງເພື່ອຮັບປະກັນໃຫ້ກຳປັ່ນ,ເຮືອ,ເຄື່ອງບິນ ແລະ ຍານພາຫະນະຕ່າງໆຂອງ ສ ປປ ລາວ ຢູ່ໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນໄດ້ຮັບສິດ ແລະ ຜົນປະໂຫຍດອັນຊອບທຳຢ່າງຄົບຖ້ວນຕາມລະບຽບກົດໝາຍຂອງລັດທີ່ຮັບ ຫລື ຕາມສົນທິສັນຍາລະຫວ່າງປະເທດທີ່ ສ ປປ ລາວ ແລະ ລັດທີ່ຮັບໄດ້ລົງນາມ ຫລື ເຂົ້າຮ່ວມເປັນພາຄີ ຫລື ຕາມກົດໝາຍປະເພນີລະຫວ່າງປະເທດ.
- ໃນກໍລະນີບັນດາຍານພາຫະນະທີ່ໄດ້ລະບຸໄວ້ໃນວັກ 1 ຂອງຂໍ້14.6 ນີ້ ປະສົບອຸບັດຕິເຫດ ຫລື ຖືກປຸ້ນຈີ້ໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນ, ກົງສຸນກິດຕິມະສັກຕ້ອງເອົາທຸກມາດຕະການເພື່ອແກ້ໄຂ ແລະ ໃຫ້ການຊ່ວຍເຫລືອຄົນ ແລະ ຍານພາຫະນະທີ່ປະສົບອຸບັດຕິເຫດດັ່ງກ່າວ, ພ້ອມກັນນັ້ນກໍ່ລາຍງານໃຫ້ສຳນັກງານການທູດຂອງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດຊາບ.

14. 7 ໜ້າທີ່ໃນການສົ່ງເສີມ:

- ເຄື່ອນໄຫວສົ່ງເສີມທາງດ້ານເສດຖະກິດ ແລະ ວັດທະນາທຳເຊັ່ນ: ຈັດການພົບປະທາງທຸລະກິດ, ຈັດການຢ້ຽມຢາມແກ່ຄະນະຜູ້ແທນການຄ້າ, ວິທະຍາສາດ, ວັດທະນະທຳ ແລະ ກິດຈະກຳອື່ນໆ, ຈັດການວາງສະແດງກ່ຽວກັບ ສ ປປ ລາວ ພາຍຫລັງໄດ້ປຶກສາຫາລືກັບ

ສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດ.

- ໃນການຈັດກິດຈະກຳສົ່ງເສີມດັ່ງກ່າວຂ້າງເທິງ, ກົງສຸນກິດຕິມະສັກຈະຕ້ອງສະຫນອງສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກສຳລັບວາງສະແດງເອກະສານ, ເຈັ້ຍພັບໂຄສະນາ ແລະ ສິ່ງພິມອື່ນໆທີ່ລັດຖະບານ ແຫ່ງ ສ ປປ ລາວ ຈັດສົ່ງມາໃຫ້ເຊັ່ນ: ເອກະສານສຳລັບສົ່ງເສີມການສົ່ງອອກ, ການລົງທຶນ ແລະ ທ່ອງທ່ຽວ, ສະຫມຸດໂທລະສັບຂອງ ສ ປປ ລາວ, ແລະ ສິ່ງພິມອື່ນໆ ທີ່ພົວພັນກັບເສດຖະກິດ, ວັດທະນະທຳ ແລະ ປະຫວັດສາດຂອງ ສ ປປ ລາວ.

## ມາດຕາ 15. ການເຄົາລົບລະບຽບກົດຫມາຍ

15.1 ເຄົາລົບລະບຽບກົດຫມາຍຂອງ ສ ປປ ລາວ, ຂອງລັດທີ່ຮັບ ແລະ ບັນດາສົນທິສັນຍາລະຫວ່າງປະເທດທີ່ ສ ປປ ລາວ ແລະ ລັດທີ່ຮັບໄດ້ລົງນາມ ຫລື ເຂົ້າຮ່ວມເປັນພາຄີ ຫລື ກົດຫມາຍປະເພນີລະຫວ່າງປະເທດ;

15.2 ປະຕິບັດທຸກຄຳສັ່ງ, ຄຳແນະນຳ, ລະບຽບການ ຫລື ການມອບຫມາຍຂອງລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສ ປປ ລາວ ຢ່າງເຂັ້ມງວດ, ໃນເງື່ອນໄຂທີ່ການປະຕິບັດຫນ້າທີ່ດັ່ງກ່າວຫາກບໍ່ຂັດກັບລະບຽບກົດຫມາຍ ແລະ ຂະນົບທຳນຽມປະເພນີຂອງລັດທີ່ຮັບ;

15.3 ບໍ່ໃຫ້ນຳໃຊ້ສິດ, ອະພິສິດ ແລະ ການຄຸ້ມກັນທີ່ຕົນໄດ້ຮັບໃນທາງທີ່ບໍ່ຖືກຕ້ອງ.

# ຫມວດທີ 4
# ລະບອບການລາຍງານ ແລະ ການປະສານງານ

## ມາດຕາ 16. ລະບອບການລາຍງານ

16.1 ສຳນັກງານກົງສຸນກິດຕິມະສັກຕ້ອງສົ່ງບົດລາຍງານການປະຕິບັດຫນ້າທີ່ຂອງຕົນໃຫ້ສຳນັກງານການທູດແຫ່ງ ສ ປປ ລາວປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບທຸກໆ3 ເດືອນ. ໃນກໍລະນີບໍ່ມີສຳນັກງານດັ່ງກ່າວປະຈຳຢູ່ລັດທີ່ຮັບ ຫລື ຮັບຜິດຊອບລັດທີ່ຮັບ, ໃຫ້ສົ່ງບົດລາຍງານໃຫ້ກົມກົງສຸນ ກະຊວງການຕ່າງປະເທດ;

16.2 ສຳນັກງານການທູດ ແຫ່ງ ສ ປປ ລາວປະຈຳລັດທີ່ຮັບ ຫລື ຮັບຜິດຊອບລັດທີ່ຮັບມີຫນ້າທີ່ສົ່ງບົດລາຍງານປະເມີນຜົນການປະຕິບັດຫນ້າທີ່ຂອງສຳນັກງານກົງສຸນກິດຕິມະສັກໃຫ້ ກົມກົງສຸນ ກະຊວງການຕ່າງປະເທດທຸກໆ 3 ເດືອນ.

ມາດຕາ 17. ການປະສານງານ

17.1 ສຳນັກງານກົງສຸນກິດຕິມະສັກສາມາດຕິດຕໍ່ ແລະ ພົວພັນໂດຍກົງກັບເຈົ້າຫນ້າທີ່ທ້ອງຖິ່ນຂອງລັດທີ່ຮັບພາຍໃນຂອບເຂດເຄື່ອນໄຫວກົງສຸນຂອງຕົນ ກ່ຽວກັບບັນຫາທີ່ພົວພັນເຖິງການເຄື່ອນໄຫວວຽກງານຂອງສຳນັກງານ. ໃນກໍລະນີທີ່ມີຄວາມຈຳເປັນຕ້ອງພົວພັນກັບເຈົ້າຫນ້າທີ່ຂັ້ນສູນກາງຂອງລັດທີ່ຮັບ, ກົງສຸນກິດຕິມະສັກຈະຕ້ອງປະສານຜ່ານສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ. ຖ້າຫາກບໍ່ມີສຳນັກງານການທູດ ແຫ່ງ ສ ປປ ລາວປະຈຳຢູ່ລັດທີ່ຮັບ ກົງສຸນກິດຕິມະສັກຈະຕ້ອງປະສານຜ່ານກະຊວງການຕ່າງປະເທດຂອງລັດທີ່ຮັບ ຫລື ຖ້າລະບຽບກົດຫມາຍ ແລະ ຂະນົບທຳນຽມຮີດຄອງປະເພນີຂອງລັດທີ່ຮັບຫາກອະນຸຍາດ ກົງສຸນກິດຕິມະສັກກໍສາມາດຕິດຕໍ່ພົວພັນໂດຍກົງ ຫລື ຖ້າວ່າລະຫວ່າງ ສ ປປ ລາວ ແລະ ລັດທີ່ຮັບຫາກມີການຕົກລົງເປັນເອກະພາບກັນໃນບັນຫາດັ່ງກ່າວ;

17.2 ກົງສຸນກິດຕິມະສັກສາມາດຕິດຕໍ່ພົວພັນກັບບຸກຄົນ, ການຈັດຕັ້ງຂັ້ນທ້ອງຖິ່ນ ແລະ ສູນກາງຂອງ ສ ປປ ລາວ ໂດຍຜ່ານສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລືທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດ. ໃນກໍລະນີບໍ່ມີສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລື ໃນກໍລະນີທີ່ຮີບດ່ວນ ຫລື ຈຳເປັນໃດຫນຶ່ງ, ກົງສຸນກິດຕິມະສັກກໍສາມາດຕິດຕໍ່ພົວພັນໂດຍຜ່ານກົມກົງສຸນ ກະຊວງການຕ່າງປະເທດ.

## ຫມວດທີ 5
## ວຽກບໍລິຫານ ແລະ ງົບປະມານ

ມາດຕາ 18. ບັນນະສານ

18.1 ກາປະທັບ

- ສຳນັກງານກົງສຸນກິດຕິມະສັກໄດ້ຮັບກາປະທັບຂອງສຳນັກງານເປັນພາສາລາວ.ກົງສຸນກິດຕິມະສັກມີສິດນຳໃຊ້ກາປະທັບໃນການປະຕິບັດຫນ້າທີ່ທາງການຂອງສຳນັກງານກົງສຸນກິດຕິມະສັກເທົ່ານັ້ນ ແລະ ມີຫນ້າທີ່ຮັກສາກາປະທັບດັ່ງກ່າວ. ເມື່ອສິ້ນສຸດການປະຕິບັດຫນ້າທີ່ກົງສຸນກິດຕິມະສັກ, ຜູ້ກ່ຽວຕ້ອງສົ່ງຄືນໃຫ້ຫົວຫນ້າສຳນັກງານການທູດ ແຫ່ງ ສ ປປ ລາວປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ບຸກຄົນທີ່ໄດ້ຮັບການມອບສິດຈາກລັດຖະມົນຕີວ່າການກະຊວງການຕ່າງປະເທດ.

18.2 ທຸງຊາດ , ເຄື່ອງຫມາຍຊາດ ແລະ ປ້າຍສະຫລັກຊື່

- ທຸງຊາດ ແລະ ເຄື່ອງຫມາຍຊາດໄດ້ຮັບການຕິດຕັ້ງຢູ່ຕຶກ(ເຮືອນ)ທີ່ໃຊ້ເປັນສຳນັກງານກົງສຸນກິດຕິມະສັກ;

- ປ້າຍສະຫລັກຊື່ຂອງສຳນັກງານກົງສຸນກິດຕິມະສັກເປັນພາສາລາວ ແລະ ພາສາຂອງລັດທີ່ຮັບໄດ້ຮັບການຕິດຕັ້ງຢູ່ຂ້າງປະຕູເຂົ້າ-ອອກຂອງຕຶກ(ເຮືອນ)ດັ່ງກ່າວ;
- ທຸງຊາດລາວໄດ້ຮັບການຕິດຕັ້ງຢູ່ເຮືອນພັກຂອງຫົວໜ້າສຳນັກງານກົງສຸນກິດຕິມະສັກ ແລະ ຍານພາຫະນະຂອງຜູ້ກ່ຽວໃນເມື່ອຖືກນຳໃຊ້ໃນການປະຕິບັດໜ້າທີ່ທາງການ, ແຕ່ການນຳໃຊ້ດັ່ງກ່າວຕ້ອງສອດຄ່ອງກັບລະບຽບກົດໝາຍ ກໍຄືຂະນົບທຳນຽມປະເພນີຂອງລັດທີ່ຮັບ.

18.3 ເຈັ້ຍຫົວຂອງສຳນັກງານ

- ກົງສຸນກິດຕິມະສັກຮັບຜິດຊອບໃນການຈັດພິມເຈັ້ຍຫົວຂອງສຳນັກງານກົງສຸນກິດຕິມະສັກ, ສ່ວນການອອກແບບຕ້ອງໄດ້ລົມທຶບກັບສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດ.

18.4 ບັນນະສານກົງສຸນອື່ນໆ

- ກົງສຸນກິດຕິມະສັກຕ້ອງເກັບ ແລະ ຮັກສາປື້ມບັນທຶກ, ຈົດໝາຍທາງການ ແລະ ປື້ມບັນທຶກການເຄື່ອນໄຫວປະຕິບັດໜ້າທີ່ທາງການຕ່າງໆຂອງຜູ້ກ່ຽວ ໄວ້ຢູ່ໃນຫ້ອງທີ່ໃຊ້ເປັນຫ້ອງການຂອງສຳນັກງານກົງສຸນກິດຕິມະສັກໃນລັກສະນະທີ່ຮັບປະກັນຄວາມປອດໄພ ແລະ ເປັນຄວາມລັບ. ນອກຈາກນັ້ນ, ກໍຕ້ອງແຍກບັນນະສານດັ່ງກ່າວອອກຈາກເອກະສານສ່ວນຕົວຂອງຕົນ, ໂດຍສະເພາະແມ່ນບັນດາເອກະສານທີ່ພົວພັນກັບການເຄື່ອນໄຫວວິຊາຊີບ ຫລື ການຄ້າຂອງຜູ້ກ່ຽວ.
- ບັນນະສານຂອງສຳນັກງານກົງສຸນກິດຕິມະສັກແມ່ນຊັບສົມບັດຂອງ ສ ປປ ລາວ ແລະ ຈະຕ້ອງສົ່ງຄືນໃຫ້ສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດ ເມື່ອກົງສຸນກິດຕິມະສັກສິ້ນສຸດການປະຕິບັດໜ້າທີ່ຂອງຕົນ.

18.5 ເອກະສານກ່ຽວກັບນິຕິກຳກົງສຸນ

- ກະຊວງການຕ່າງປະເທດຈະສະໜອງນິຕິກຳ ແລະ ເອກະສານອື່ນໆ ທີ່ຈຳເປັນສຳລັບການປະຕິບັດໜ້າທີ່ຂອງກົງສຸນກິດຕິມະສັກເປັນພາສາລາວ ແລະ ພາສາອັງກິດໃຫ້ສຳນັກງານກົງສຸນກິດຕິມະສັກ.

18.6 ຫ້ອງການສຳນັກງານກົງສຸນກິດຕິມະສັກ ແລະ ເວລາເຮັດວຽກ

ເພື່ອປະຕິບັດໜ້າທີ່ທາງການຂອງຕົນ, ກົງສຸນກິດຕິມະສັກທຸກຄົນຈະຕ້ອງສະໜອງຄວາມສະດວກດັ່ງນີ້:

- ຫ້ອງການຂອງສຳນັກງານກົງສຸນກິດຕິມະສັກ ຊຶ່ງຕັ້ງຢູ່ສະຖານທີ່ໆເໝາະສົມ ແລະ ເຂດທີ່ເຂົ້າເຖິງງ່າຍ. ຕ້ອງມີຫ້ອງໜຶ່ງຕ່າງຫາກສຳລັບນຳໃຊ້ເປັນຫ້ອງການຂອງສຳນັກງານກົງສຸນກິດຕິມະສັກ ແລະ ເກັບມ້ຽນບັນນະສານກົງສຸນ;
- ກົງສຸນກິດຕິມະສັກຈະຕ້ອງຮັບຜິດຊອບໃນການເອົາທີ່ຢູ່, ເບີໂທລະສັບ ແລະ ໂທລະສານຂອງສຳນັກງານກົງສຸນກິດຕິມະສັກເຂົ້າໃນສະໝຸດໂທລະສັບຂອງລັດທີ່ຮັບ (ໜ້າສຳລັບ

ສຳນັກງານກົງສຸນ) ແລະ ເອົາເຂົ້າໃນສະໝຸດອື່ນໆເຊັ່ນ: ສະໝຸດການຄ້າ, ເຈັ້ຍພັບທ່ອງທ່ຽວ ແລະ ສິ່ງພິມຕ່າງໆ;

- ສຳນັກງານກົງສຸນກິດຕິມະສັກຈະຕ້ອງເປີດທຸກວັນລັດຖະການ. ປ້າຍບອກເວລາເຮັດວຽກຕ້ອງຕິດຕັ້ງຢູ່ບ່ອນທີ່ສາມາດເຫັນໄດ້ງ່າຍ. ໃນສະຖານະການສຸກເສີນ ຫລື ຈຳເປັນໃດໜຶ່ງ, ສະມາຊິກສຳນັກງານກົງສຸນກິດຕິມະສັກ ຈະຕ້ອງໄດ້ເຮັດວຽກລ່ວງເວລາເພື່ອໃຫ້ການຊ່ວຍເຫລືອທາງກົງສຸນ.

ມາດຕາ 19. ງົບປະມານ

19.1 ກົງສຸນກິດຕິມະສັກຈະບໍ່ໄດ້ຮັບເງິນເດືອນ ຫລື ເງິນອຸດໜູນໃດໆ ຈາກລັດຖະບານ ແຫ່ງ ສ ປປ ລາວ;

19.2 ກົງສຸນກິດຕິມະສັກຈະຕ້ອງຮັບພາລະການໃຊ້ຈ່າຍທັງໝົດຂອງສຳນັກງານກົງສຸນກິດຕິມະສັກ ລວມທັງເງິນເດືອນຂອງສະໝຽນກົງສຸນກິດຕິມະສັກ;

19.3 ກົງສຸນກິດຕິມະສັກຈະບໍ່ເກັບຄ່າທຳນຽມສຳລັບການບໍລິການແກ່ພົນລະເມືອງລາວ, ຍົກເວັ້ນການບໍລິການໃນຖານະວິຊາຊີບສ່ວນຕົວຂອງຜູ້ກ່ຽວ, ແຕ່ຕ້ອງແຈ້ງໃຫ້ບຸກຄົນທີ່ຕົນເອງໃຫ້ບໍລິການຊາບລ່ວງໜ້າ.

## ໝວດທີ 6
## ກົງຈັກການຈັດຕັ້ງ, ຄວາມສະດວກ, ອະພິສິດ ແລະ ການຄຸ້ມກັນ

ມາດຕາ 20. ກົງຈັກການຈັດຕັ້ງ

20.1 ສຳນັກງານກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ປະກອບດ້ວຍກົງສຸນໃຫຍ່ກິດຕິມະສັກ ຫລື ກົງສຸນກິດຕິມະສັກ1 ທ່ານ;

20.2 ສຳນັກງານກົງສຸນກິດຕິມະສັກອາດປະກອບດ້ວຍສະໝຽນກົງສຸນອີກຈຳນວນໜຶ່ງ ທີ່ເປັນຄົນທ້ອງຖິ່ນ, ແຕ່ການຮັບເອົາບຸກຄົນດັ່ງກ່າວເຂົ້າເຮັດວຽກ ຕ້ອງໄດ້ຮັບການຕົກລົງເຫັນດີຈາກສຳນັກງານການທູດ ແຫ່ງ ສ ປປລາວ ປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ຈາກກົມກົງສຸນ ກະຊວງການຕ່າງປະເທດ;

20.3 ໃນກໍລະນີຈຳເປັນ ແລະ ບົນພື້ນຖານການຕົກລົງເຫັນດີເປັນເອກະພາບລະຫວ່າງ ສ ປປ ລາວ ແລະ ລັດທີ່ຮັບ, ກະຊວງການຕ່າງປະເທດອາດແຕ່ງຕັ້ງພະນັກງານກົງສຸນອາຊີບຂອງກະຊວງການຕ່າງປະເທດ ແຫ່ງ ສ ປປ ລາວໄປປະຕິບັດໜ້າທີ່ຢູ່ສຳນັກງານກົງສຸນກິດຕິມະສັກ.

ມາດຕາ 21. ຄວາມສະດວກ, ອະພິສິດ ແລະ ການຄຸ້ມກັນ

ກົງສຸນກິດຕິມະສັກຈະໄດ້ຮັບຄວາມສະດວກ, ອະພິສິດ ແລະ ການຄຸ້ມກັນຕາມບົດບັນຍັດຂອງສົນທິສັນຍາວຽນນາວ່າດ້ວຍການພົວພັນທາງການກົງສຸນສະບັບລົງວັນທີ 22 ເມສາ 1963 ແລະ ຕາມລະບຽບການທີ່ກ່ຽວຂ້ອງຂອງລັດທີ່ຮັບ.

## ໝວດທີ 7
## ວາລະການແຕ່ງຕັ້ງ, ການລາພັກ, ການຍ້ອງຍໍ ແລະ ການສິ້ນສຸດໜ້າທີ່

ມາດຕາ 22. ວາລະ ແລະ ການຕໍ່ວາລະການແຕ່ງຕັ້ງ

22.1 ວາລະການແຕ່ງຕັ້ງຂອງກົງສຸນກິດຕິມະສັກແມ່ນ 3 ປີ;

22.2 ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສ ປປ ລາວ ຈະພິຈາລະນາຕໍ່ວາລະແຕ່ງຕັ້ງກົງສຸນກິດຕິມະສັກຕາມການສະເໜີຂອງຫົວໜ້າສຳນັກງານການທູດ ແຫ່ງ ສ ປປ ລາວປະຈຳຢູ່ລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ແລະ ຕາມການສະເໜີຂອງຫົວໜ້າກົມກົງສຸນ ກະຊວງການຕ່າງປະເທດ;

22.3 ການຕໍ່ວາລະການແຕ່ງຕັ້ງຈະຕ້ອງຂຶ້ນກັບຄວາມພ້ອມຂອງກົງສຸນກິດຕິມະສັກ.

ມາດຕາ 23. ການລາພັກ

23.1 ຫົວໜ້າສຳນັກງານການທູດແຫ່ງ ສ ປປ ລາວ ປະຈຳລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ຫົວໜ້າກົມກົງສຸນ ກະຊວງການຕ່າງປະເທດ ອາດອະນຸຍາດໃຫ້ກົງສຸນກິດຕິມະສັກລາພັກບໍ່ເກີນ 3 ເດືອນພາຍໃນ 1 ປີ;

23.2 ການລາພັກເກີນ 3 ເດືອນຕ້ອງໄດ້ຮັບອະນຸຍາດລ່ວງໜ້າຈາກລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສ ປປ ລາວ;

23.3 ໃນໄລຍະທີ່ຜູ້ກ່ຽວລາພັກ ແລະ ບໍ່ໄດ້ປະຕິບັດໜ້າທີ່ກົງສຸນຢູ່ສຳນັກງານກົງສຸນກິດຕິມະສັກ, ຜູ້ກ່ຽວຕ້ອງອອກແຈ້ງການເປັນລາຍລັກອັກສອນຕິດຢູ່ໜ້າສຳນັກງານກົງສຸນກິດຕິມະສັກ ເພື່ອປະກາດໃຫ້ແຂກຊາບບ່ອນທີ່ເຂົາເຈົ້າຈະຕິດຕໍ່ພົວພັນ.

ມາດຕາ 24. ການຍ້ອງຍໍ

ກົງສຸນກິດຕິມະສັກ ທີ່ມີຜົນງານດີເດັ່ນປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ການລົງທຶນ, ການທ່ອງທ່ຽວ, ວັດທະນາທຳ ແລະ ອື່ນໆ ລະຫວ່າງ ສ ປປ ລາວ ແລະ ຂອບເຂດເຄື່ອນໄຫວກົງສຸນຂອງຕົນ, ແລະ ມີຜົນງານໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສ ປປ ລາວ, ທັງສ່ວນບຸກຄົນ ແລະ ນິຕິ

ບຸກຄົນຈະໄດ້ຮັບການຍ້ອງຍໍສັນລະເສີນຈາກລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ລັດຖະບານ ແຫ່ງ ສ ປປ ລາວ ຕາມຄວາມເຫມາະສົມ.

### ມາດຕາ 25. ການສິ້ນສຸດໜ້າທີ່

25.1 ໜ້າທີ່ຂອງກົງສຸນກິດຕິມະສັກຈະສິ້ນສຸດລົງກ່ອນວາລະການແຕ່ງຕັ້ງຍ້ອນເຫດຜົນດັ່ງນີ້:

- ລາອອກຕາມການສະເໜີຂອງຜູ້ກ່ຽວ;
- ຖືກລັດຖະມົນຕີວ່າການກະຊວງການຕ່າງປະເທດ ປົດອອກຈາກໜ້າທີ່ຕາມການສະເໜີຂອງຫົວໜ້າສຳນັກງານການທູດຂອງ ສປປ ລາວ ປະຈຳຢູ່ລັດທີ່ຮັບ ຫລືທີ່ຮັບຜິດຊອບລັດທີ່ຮັບ ແລະ ຕາມການສະເໜີຂອງຫົວໜ້າກົມກົງສຸນ ກະຊວງການຕ່າງປະເທດ;
- ກົງສຸນກິດຕິມະສັກເສຍຊີວິດ.

25.2 ໃນກໍລະນີກົງສຸນກິດຕິມະສັກມີຈຸດປະສົງລາອອກຈາກຕຳແໜ່ງ, ຜູ້ກ່ຽວຈະຕ້ອງສົ່ງຄຳຮ້ອງຂໍລາອອກໃຫ້ລັດຖະມົນຕີວ່າການກະຊວງການຕ່າງປະເທດລ່ວງໜ້າ 3 ເດືອນ;

25.3 ລັດຖະມົນຕີວ່າການກະຊວງການຕ່າງປະເທດຈະງົດໜ້າທີ່ຂອງກົງສຸນກິດຕິມະສັກຍ້ອນເຫດຜົນດັ່ງນີ້:

- ບໍ່ປະຕິບັດໜ້າທີ່ຂອງຕົນຢ່າງຕໍ່ເນື່ອງເປັນເວລາ 30 ວັນຂຶ້ນໄປ ໂດຍບໍ່ໄດ້ຮັບອະນຸຍາດຈາກສຳນັກງານການທູດ ແຫ່ງ ສ ປປ ລາວ ປະຈຳລັດທີ່ຮັບ ຫລື ທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດ;
- ບໍ່ປະຕິບັດຕາມການຊີ້ນຳຂອງສຳນັກງານການທູດ ແຫ່ງ ສ ປປ ລາວປະຈຳຢູ່ລັດທີ່ຮັບ ຫລືທີ່ຮັບຜິດຊອບລັດທີ່ຮັບ ຫລື ກົມກົງສຸນ ກະຊວງການຕ່າງປະເທດ;
- ບໍ່ປະຕິບັດຕາມບົດບັນຍັດຂອງຂໍ້ຕົກລົງສະບັບນີ້;
- ຖືກລັດທີ່ຮັບປະກາດເປັນບຸກຄົນບໍ່ເພິ່ງປາຖະໜາ;
- ທຸລະກິດ ຫລື ບໍລິສັດບ່ອນທີ່ຜູ້ກ່ຽວເຮັດວຽກຖືກປະກາດຍຸບເລີກ ຫລື ລົ້ມລະລາຍ;
- ຖືກສານຕັດສິນລົງໂທດຍ້ອນໄດ້ກະທຳຜິດທາງອາຍາ;
- ມີການເຄື່ອນໄຫວ ຫລື ການກະທຳອື່ນໆທີ່ກໍ່ໃຫ້ເກີດຄວາມເສື່ອມເສຍ ແລະ ຄວາມເສຍຫາຍຕໍ່ພາບພົດຊື່ສຽງ ແລະ ຜົນປະໂຫຍດຂອງ ສ ປປ ລາວ.

25.4 ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສ ປປ ລາວ ສາມາດງົດໜ້າທີ່ຂອງກົງສຸນກິດຕິມະສັກໃນເວລາໃດກໍ່ໄດ້ ໂດຍບໍ່ຈຳເປັນຕ້ອງອະທິບາຍເຫດຜົນ ໃນເມື່ອກົງສຸນກິດຕິມະສັກບໍ່ປະຕິບັດຕາມບົດບັນຍັດຂອງຂໍ້ຕົກລົງສະບັບນີ້ ຫລື ເມື່ອລັດຖະມົນຕີວ່າການກະຊວງການຕ່າງປະເທດພິຈາລະນາເຫັນວ່າບໍ່ມີຄວາມຈຳເປັນຕ້ອງແຕ່ງຕັ້ງກົງສຸນກິດຕິມະສັກອີກຕໍ່ໄປ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 26. ການຈັດຕັ້ງປະຕິບັດ**

26.1 ກົມກົງສຸນ ກະຊວງການຕ່າງປະເທດ ມີໜ້າທີ່ແນະນຳບັນດາສຳນັກງານຜູ້ຕາງໜ້າ ແລະ ສຳນັກງານກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ປະຈຳຢູ່ຕ່າງປະເທດ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ປະກົດຜົນເປັນຈິງ;

26.2 ບັນດາສຳນັກງານຜູ້ຕາງໜ້າ ແລະ ຫົວໜ້າສຳນັກງານກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ປະຈຳຢູ່ຕ່າງປະເທດມີໜ້າທີ່ໃຫ້ການຮ່ວມມືຢ່າງແໜ້ນແຟ້ນກັບກົມກົງສຸນ ກະຊວງການຕ່າງປະເທດ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງຖືກຕ້ອງ ແລະ ເຂັ້ມງວດ;

**ມາດຕາ 27. ຜົນສັກສິດ**

27.1 ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງສະບັບລົງວັນທີ 30 ທັນວາ 2002 ແລະ ມີຜົນສັກສິດເລີ່ມແຕ່ວັນລົງລາຍເຊັນເປັນຕົ້ນໄປ;

27.2 ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ຍ້ອນຫລັງຕໍ່ກົງສຸນກິດຕິມະສັກ ແຫ່ງ ສ ປປ ລາວ ທີ່ໄດ້ຮັບການແຕ່ງຕັ້ງກ່ອນຂໍ້ຕົກລົງສະບັບມີຜົນສັກສິດ;

27.3 ບັນດາບົດບັນຍັດ ຫລື ຂໍ້ກຳນົດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ອນແຕ່ຖືກຍົກເລີກ.

ຮອງນາຍົກລັດຖະມົນຕີ,
ລັດຖະມົນຕີວ່າການກະຊວງການຕ່າງປະເທດ

ກະຊວງການຕ່າງປະເທດ
ລັດຖະມົນຕີ

ທອງລຸນ ສີສຸລິດ